# ບົດທີ 15

# ການພິພາກສາບັນດາປະຊາຊາດ







ບໍ່ມີຄົນຂັບລົດຈັກຄົນດຽວທີ່ຈະຂັບໄປບ່ອນບໍ່ມີທາງ ແຕ່ມີຫຼາຍຄົນທີ່ບໍ່ຢາກໄປທາງຂອງພະເຈົ້າ ເຊັ່ນດຽວກັນເຂົາບໍ່ຢາກໄປທາງຂອງພະຍາມານ ທີ່ຈິງໃນເລື່ອງນີ້ບໍ່ມີທາງກາງ. ຕໍ່ໄປເຮົາຮຽນກ່ຽວກັບບັນຫານັ້ນ

**1** ໃຫ້ເຮົາຮຽນຄືນກ່ອນ.

ກ. ໃນອາທິດສຸດທ້າຍນັ້ນພະເຢຊູເທດສະໜາຢູ່ພູໃດ? ____________________

ຂ. ມັດທາຍບັນທຶກເລື່ອງຄຳເທດສະໜານັ້ນໃນບົດໃດແດ່? ____________________

ຄ. ເທດສະໜາວັນໃດ? ____________________

ງ. ຕອນໃດ? ____________________

ຈ. ກ່ອນນັ້ນພະອົງໂຕ້ຖຽງກັບພວກຜູ້ນຳສາດສະໜາຢູ່ບ່ອນໃດ? ____________________

ສ. ແລ້ວປະນາມໃຜແດ່? ____________________ ແລະ ____________________

ຊ. ໃນຄຳເທດສະໜາພະອົງຍົກກ່າວສອງເລື່ອງໃດ? ____________________



ຍ. ພະເຍຊູຍົກຄຳອຸປະມາ 3 ປະການ. ໃຫ້ທ່ານຈົດສອງປະການທີ່ເຮົາຮຽນມາແລ້ວພ້ອມ ດ້ວຍກັບບົດແລະຂໍ້ພະຄຳພີ.

________________________________ ໃນ ມທ ________________

________________________________ ໃນ ມທ ________________

ດ. ແມ່ນຄຳອຸປະມາໃດທີ່ເຮົາບໍ່ໄດ້ຮຽນເທື່ອ? ________________________

ຕ. ຄຳອຸປະມານັ້ນ ເຫັນໃນ ມັດທາຍບົດແລະຂໍ້ໃດ? ________________

**2** ໃຫ້ອ່ານ ມທ 25:31-46 ຕອນພະຄຳພີນີ້ບັນລະຍາຍເລື່ອງການພິພາກສາເປັນຕົ້ນແຕ່ມີຄຳອຸ ປະມານ້ອຍລວມຢູ່ນຳຢູ່ ໃນຂໍ້ 31 ແມ່ນໃຜຈະເປັນຜູ້ພິພາກສາ? ________________ ຄຳວ່າບຸດມະນຸດນັ້ນອ້າງເຖິງໃຜ? ________________________________

**3** ກ. ໃນຂໍ້ 34 ພະອົງຈະມາພິພາກສາໂລກໃນສະພາບຕຳແໜ່ງໃດ? ______________

ຂ. ໃນຂໍ້ 31 ພະອົງຈະນັ່ງບ່ອນໃດ? ________________________________

ຄ. ທຳມະດາແມ່ນຄົນຕຳແໜ່ງໃດທີ່ເຄີຍນັ່ງພະທີ່ນັ່ງ? ____________________

ງ. ສະແດງວ່າຜູ້ໃດເປັນກະສັດ? ____________________________________

*ຖ້າແມ່ນວ່າພະເຍຊູຈະເປັນຜູ້ພິພາກສາ:*

** ຄົນທີ່ໄວ້ວາງໃຈກັບພະເຍຊູຈະຮັບການເລົ້າໂລມໃຈ*

** ເປັນຄຳເຕືອນຕໍ່ຄົນທີ່ປະຕິເສດບໍ່ຮັບພະອົງ*

**4** ກ. ຕາມໃນ ມທ 25:32 ແມ່ນໃຜຈະຖືກພິພາກສາ? ______________________

ຂ. ຜູ້ພິພາກສາຄືໃຜ? ____________________________________________

**5** ໃນ ມທ 25:33 ຈະແບ່ງເປັນຈັກຝູງ? ________________________________

**6** ໃຫ້ທ່ານເປີດເບິ່ງຂໍ້ພະຄຳພີຕໍ່ໄປນີ້ ແລ້ວຮຽນເອົາດ້ວຍວິທີປຽບທຽບ.

ກ. ມທ 3:12 ພະອົງຈະແບ່ງມະນຸດອອກເປັນຈັກຈຳພວກ? __________________

ຂ. ມທ 7:13-14 ມີປະຕູຈັກປ່ອງ? ________________________________

ຄ. ມທ 13:30 ມີເຂົ້າສອງຢ່າງໃດ? ________________________________

ງ. ມທ 13:49-50 ພວກເທວະດາຈະມາແຍກຄົນເປັນສອງຈຳພວກໃດ? ______ ______

ຈ. ໂຢຮັນ 8:42-44 ອ້າງເຖິງຜູ້ທີ່ມີ _______________ ເປັນພະບິດາ ແລະພວກທີ່ມາຈາກພໍ່ຂອງທ່ານຄື ____________ (ຕື່ມ)

ສ. 1 ໂຢຮັນ 5:12 ແບ່ງຄົນເປັນສອງຈຳພວກໃດ?

_______________________________ ແລະ ____________________________

**7** ບັດນີ້ ເຮົາຈະສະຫລູບເລື່ອງ

ກ. ພະຄຳພີສອນຢ່າງຈະແຈ້ງວ່າ ຕໍ່ໜ້າພະເຈົ້າມະນຸດເຮົາແບ່ງເປັນຈັກຈຳພວກ? ________

ຂ. ຖ້າມີແຕ່ຈຳພວກໜຶ່ງຢູ່ຝ່າຍພະເຈົ້າ ແລະອີກຈຳພວກໜຶ່ງຢູ່ຝ່າຍພະຍາມານຈະມີອີກຈຳພວກນຶ່ງທີ່ເປັນກາງ ບໍ່? ________________________________________________

ຄ. ເປັນຫຍັງບໍ່ມີຄົນກາງ? ________________________________________________

_________________________________________________________________

**8** ແມ່ນຊາດໃດທີ່ຈະຖືກພິພາກສາ? ________________________________________

**9** ໃຫ້ເບິ່ງ ມທ 25:46. ທັງສອງນັ້ນຈະໄປສູ່ຫຍັງ?

___________________________________________________________________

___________________________________________________________________

**10** ໃຫ້ອ່ານ ມທ 25:41

ກ. ຜູ້ທີ່ຢູ່ເບື້ອງຊ້າຍຈະຕ້ອງຖອຍໜີຈາກໃຜ? ___________________________________

ຂ. ເຂົ້າໄປໃນໄຟຢ່າງໃດ? ________________________________________________

ຄ. ທີ່ຈັດຕຽມໄວ້ສຳລັບໃຜ? _______________________________________________

**11** ກ. ມະນຸດເຮົາຈະແບ່ງເປັນຈັກຈຳພວກ? ___________________________________

ຂ. ທາງໄປແບ່ງເປັນຈັກເສັ້ນ? _____________________________________________

**12** ຜູ້ທີ່ຢູ່ຂ້າງຊ້າຍຈະຖືກໂທດ ແຕ່ພວກທີ່ຢູ່ຂ້າງຂວາຈະເຂົ້າສູ່ຫຍັງ? _________________

___________________________________________________________________

**13** ກ. ແມ່ນໃຜຈະເປັນຜູ້ພິພາກສາ? _________________________________________

ຂ. ແມ່ນໃຜຈະຖືກການພິພາກສາ? ______________________________________

ຄ. ມະນຸດຈະແບ່ງເປັນຈັກຈຳພວກ? ____________________________________

ງ. ຜົນສຸດທ້າຍ ແຕ່ລະພວກຈະເປັນຢ່າງໃດ?

_________________________________________________________________

_________________________________________________________________

**14** ມທ 25:35-36 ບອກສາເຫດທີ່ຄົນຢູ່ຂ້າງຂວາຈະໄດ້ເຂົ້າລາຊະອານາຈັກສະຫວັນ. ແມ່ນເພາະເຫດໃດ?

______ ເຂົາຮັກສາເພື່ອນຂອງເຂົາໄວ້

______ ເຂົາຮັກສາດ້ານຈິດວິນຍານຂອງຕົນເອງໂດຍບໍ່ຫ່ວງຄົນອື່ນ

______ ເຂົາຮັກສາຄົນທຸກຍາກ

**15** ມັດທາຍ 16:27 ບອກວ່າພະອົງຈະປະທານບຳເໜັດໃຫ້ທຸກຄົນຕາມຫຍັງ? ____________

**16** ໃນໂລມ 2:6 ເຫັນວ່າພະອົງຊົງປະທານຕອບແທນຕາມຫຍັງ? ____________________

**17** ຕໍ່ໄປໃນພະທຳໂລມ ບົດທີ 3 ຂໍ້ 28 ບອກວ່າ: "... ຄົນໜຶ່ງຄົນໃດຈະຖືວ່າຊອບທຳໄດ້ ກໍໂດຍອາໄສຄວາມ _____________ ນອກຈາກການປະຕິບັດຕາມພະບັນຍັດ." (ຕື່ມຄວາມທີ່ຂາດ)

*ເອະ! ສອງຂໍ້ໃນພະທຳໂລມບໍ່ກ່າວຂັດແຍ່ງກັນບໍ່.*

**18** ໃຫ້ເປີດພະທຳຢາໂກໂບ ບົດທີ 2 ແລ້ວອ່ານຂໍ້ 17 ກ່ອນ.

ກ. ຄວາມເຊື່ອທີ່ບໍ່ມີການປະຕິບັດເປັນຢ່າງໃດ? ______________________________

ຂ. ຄວາມເຊື່ອທີ່ເປັນຢູ່ ຈະມີຫຍັງພ້ອມ? ____________________________________

ຄົນທີ່ມີຄວາມເຊື່ອປະຈຳຈະຊ່ວຍຄົນທຸກຍາກຢ່າງທີ່ພະເຢຊູບອກໃນມັດທາຍບົດທີ 25.

**19** ກ. ໃຫ້ອ່ານຕໍ່ໃນ ຢາໂກໂບ 2:18 ເພິ່ນຈະສະແດງໃຫ້ເຫັນຄວາມເຊື່ອດ້ວຍການຫຍັງ? ____

ຂ. ຄວາມເຊື່ອທີ່ເປັນຢູ່ ຈະສະແດງອອກດ້ວຍການປະຕິບັດ. ຖ້າຢ່າງນັ້ນການປະຕິບັດເປັນຢ່າງໃດ? (ເລືອກ)

______ ເປັນຫຼັກຖານວ່າມີຄວາມເຊື່ອແທ້ຈິງ

______ ຂັດແຍ່ງກັບຄວາມເຊື່ອ

______ ການປະຕິບັດກໍບໍ່ສຳຄັນ



**20** ຕໍ່ໄປຂໍ້ 22 ອະທິບາຍຢ່າງຈະແຈ້ງກວ່າອີກ.

ກ. ແມ່ນດ້ວຍການຫຍັງທີ່ຄວາມເຊື່ອຂອງອັບລາຮາມຈິ່ງສຳເລັດ? ______________________________

ຂ. ການປະຕິບັດຂອງອັບລາຮາມ ເປັນຫຼັກຖານຢ່າງໃດ?

_____________________________________

**21** ໃຫ້ອ່ານ ເອເຟໂຊ 2:8-10 ຄວາມພົ້ນມີມາຍ້ອນການປະຕິບັດບໍ່? _________________

**22** ກ. ເຮົາໄດ້ຖືກຊົງໂປດໃຫ້ພົ້ນຍ້ອນຫຍັງ? __________________________________

ຂ. ດ້ວຍທາງຫຍັງ? __________________________________________________

*ເຮົາໄດ້ພົ້ນດ້ວຍທາງພະເຢຊູອົງດຽວ*

**23** ຂໍ້ທີ 10 ນັ້ນບອກວ່າ ພະເຈົ້າໄດ້ຈັດຕຽມເຮົາໄວ້ລ່ວງໜ້າກ່ອນເພື່ອຫຍັງ? ____________

______________________________________________________________

**24** ເຮົາບໍ່ໄດ້ພົ້ນໂດຍການປະຕິບັດແຕ່ການປະຕິບັດນັ້ນເປັນຫຼັກຖານວ່າຢ່າງໃດ? _________

______________________________________________________________

**25** ເຮົາສະແດງຄວາມເຊື່ອໂດຍຫຍັງ? ____________________________________

**26** ການປະຕິບັດເປັນຫຼັກຖານຫຍັງ? _____________________________________

**27** ການປະຕິບັດບໍ່ສາມາດໃຫ້ເຮົາໄດ້ຫຍັງ? __________________________________

**28** ຄວາມເຊື່ອແລະການປະຕິບັດມີສ່ວນກ່ຽວຂ້ອງກັນຢ່າງໃດ? (ຕື່ມຄວາມທີ່ຂາດ)
ເຮົາບໍ່ໄດ້ ___ ໂດຍການປະຕິບັດ ແຕ່ວ່າການປະຕິບັດນັ້ນເປັນຫຼັກຖານວ່າເຮົາມີ _______ .

**29** ກ. ພະເຢຊູຍົກຕົວຢ່າງການປະຕິບັດຢ່າງທີ່ພໍພະໄທພະເຈົ້າໃນມັດທາຍບົດທີ 25. ໃນບົດນັ້ນ ຄົນທີ່ຢູ່ເບື້ອງຂວາໄດ້ ຊ່ວຍຄົນທີ່ທຸກຍາກຈຶ່ງເປັນຫຼັກຖານວ່າເຂົາມີຫຍັງ? __________
ຂ. ຄົນທີ່ຢູ່ເບື້ອງຂວານັ້ນໄດ້ພົ້ນໂດຍຫຍັງ? ________________________________
ຄ. ເຮົາຮູ້ເລື່ອງຄວາມເຊື່ອຂອງເຂົາຢ່າງໃດ? ______________________________

**30** ໃຫ້ອ່ານ ມທ 25:41-43 ອີກ. ພວກຄົນຢູ່ເບື້ອງຊ້າຍມີຄວາມເຊື່ອບໍ່? ______________

**31** ຄົນທີ່ຢູ່ເບື້ອງຊ້າຍບໍ່ໄດ້ຮັກສາຄົນທຸກຍາກເປັນຫຼັກຖານວ່າເຂົາຂາດຫຍັງ? ___________

______________________________________________________________

**32** ການປະຕິບັດ ແລະຄວາມເຊື່ອມີສ່ວນກ່ຽວຂ້ອງກັນຢ່າງໃດ? (ຕື່ມຄວາມ)
ເຮົາບໍ່ໄດ້ພົ້ນໂດຍການ __________ ແຕ່ວ່າການ ___________ ນັ້ນເປັນ _________
ວ່າ ເຮົາມີຄວາມເຊື່ອແທ້ຈິງ.

**33** ຖ້າມີຄົນທີ່ພະຍາຍາມເຮັດການດີ ແຕ່ບໍ່ເຊື່ອໃນພະເຢຊູຄຣິດ
ກ. ຄົນນັ້ນໄດ້ພົ້ນບໍ່? ________________________________________________
ຂ. ເປັນຫຍັງບໍ່ໄດ້ພົ້ນ? (ຕື່ມຄວາມທີ່ຂາດຕໍ່ໄປ)
ໃນກໍລະນີນັ້ນ ການເຮັດດີບໍ່ເປັນຫຼັກ __________ ວ່າເພິ່ນ ມີຄວາມເຊື່ອ ເພາະຜູ້ກ່ຽວນັ້ນບໍ່ຮັບຮູ້ພະ __________.

**34** ກ. ໃນສາຍຕາຂອງພະເຈົ້າມະນຸດເຮົາແບ່ງເປັນຈັກຈໍາພວກ? ____________________
ຂ. ປາຍທາງຂອງແຕ່ລະຈໍາພວກຄືຫຍັງ? ___________________________________

______________________________________________________________

**35** ໃຫ້ອ່ານ ມທ 25:35-40 ດີ ໆ.

ກ. ເທື່ອໃດທີ່ເຮົາເອົາເຂົ້າໃຫ້ຄົນທີ່ຢາກແລະເອົານ້ຳໃຫ້ຄົນທີ່ຫິວກໍເໝືອນກັບວ່າເຮົາໃຫ້ໃຜ?

______________________________________________

ຂ. ເທື່ອໃດທີ່ເຮົາເອົາເຄື່ອງນຸ່ງໃຫ້ຄົນທີ່ເປືອຍຕົວ ກໍເໝືອນກັບວ່າເຮົາໃຫ້ໃຜນຸ່ງ? ________

ຄ. ເທື່ອໃດທີ່ເຮົາໄປຢ້ຽມຢາມຄົນເຈັບປ່ວຍ ກໍເໝືອນກັບວ່າເຮົາໄປຢ້ຽມຢາມໃຜ? _______

**36** ໃຫ້ອ່ານ ຂໍ້ 42-43 ດ້ວຍ. ເທື່ອໃດທີ່ເຮົາປະຕິເສດບໍ່ຊ່ວຍຄົນອື່ນກໍເໝືອນກັບວ່າເຮົາປະຕິເສດ ໃຜ? ______________________________________________

**37** ເຮົາຄວນທີ່ຈະຊ່ວຍຄົນທຸກຍາກເພາະສາເຫດໃດ? (ເລືອກ)

ກ. ເພື່ອໄດ້ກຳ ຂ. ເພື່ອໃຫ້ຜູ້ອື່ນເຫັນ ຄ. ເພື່ອພະເຢຊູ

**38** ແມ່ນດ້ວຍສາເຫດໃດທີ່ເຮົາຄວນຊ່ວຍຜູ້ອື່ນດ້ວຍຄວາມຊົມຊື່ນຍິນດີ? (ຕື່ມຄວາມທີ່ຂາດ)

ເພາະສິ່ງທີ່ເຮົາເຮັດນັ້ນກໍເໝືອນກັບວ່າເຮົາເຮັດໃຫ້ ______________________________ .

*ສິ່ງໃດທີ່ເຮົາຈະເຮັດເພື່ອພະເຢຊູ ເຮົາຈະເຮັດໂດຍຄວາມຊົມຊື່ນຍິນດີ!*

**39** ການປະຕິບັດແລະຄວາມເຊື່ອມີສ່ວນກ່ຽວຂ້ອງກັນຢ່າງໃດ? ________________________

______________________________________________

**40** ແຕ່ຍັງມີບັນຫາຢູ່ ຖ້າເຮົາຈະຊ່ວຍເຂົາຈະຊ່ວຍຢ່າງໃດດີ.

ມີຢູ່ສອງວິທີທີ່ເຮົາອາດຈະຊ່ວຍເຂົາໄດ້ຄື:

* ຊ່ວຍໂດຍກົງ

* ສອນໃຫ້ເຂົາຊ່ວຍຕົນເອງ

ກ. ຖ້າເຂົາຕ້ອງການຂອງກິນແລະເຄື່ອງນຸ່ງ ແລ້ວເຮົາເອົາອາຫານແລະເສື້ອຜ້າໃຫ້ ເຮົາຊ່ວຍ ໂດຍກົງຫຼືຊ່ວຍດ້ານຄຳ ສອນ? ______________________________

ຂ. ຖ້າເຂົາບໍ່ມີຜັກເພາະບໍ່ຮູ້ວິທີປູກເຮົາຈະຊ່ວຍຢ່າງໃດ? ___________________________

**41** ເທື່ອໃດທີ່ມີສະຖານະການຢ່າງສຸກເສີນເຮົາອາດຈະຕ້ອງຊ່ວຍໂດຍກົງກ່ອນແຕ່ຖ້າເຮົາຈະ ຊ່ວຍໂດຍກົງມາຫຼາຍ ເກີນໄປອາດຈະມີຜົນຮັບບໍ່ດີເກີດຂຶ້ນມາ. ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ ທ່ານໝາຍ √ ໄວ້ກັບຜົນຮັບບໍ່ດີນັ້ນ

ກ.______ຖ້າເຮົາຊ່ວຍເຂົາໂດຍກົງເຂົາອາດຈະອາໄສຄວາມຊ່ວຍເຫຼືອຢູ່ເລື້ອຍໆ ຈົນກາຍ ເປັນຄົນຂີ້ຄ້ານ.

ຂ.______ເຂົາອາດຈະມີຄວາມຫວັງວ່າຈະໄດ້ເຮັດວຽກພໍລ້ຽງຕົນເອງໄດ້.

ຄ.______ຖ້າມີແຕ່ການຊ່ວຍເຫຼືອໂດຍກົງຢູ່ສະເໝີ ຜູ້ກ່ຽວອາດຈະບໍ່ຊອກຫາທາງທີ່ຈະແກ້ບັນ ຫາຊີວິດຂອງຕົນຢ່າງຖາວອນ.

ງ. ______ເຂົາອາດຈະຂອບໃຈພະເຈົ້າທີ່ມີຜູ້ຊ່ວຍ.

**42** ມີບາງຄົນທີ່ຂໍຄວາມຊ່ວຍເຫຼືອຢູ່ຫຼາຍເກີນໄປ ແລະມີອີກບາງຄົນທີ່ຈະບໍ່ຂໍຈັກເທື່ອ ບາງຄົນຂໍແຕ່ເງິນ ເມື່ອເຂົາໄດ້ ເງິນແລ້ວເຂົາອາດຈະໃຊ້ໃນທາງທີ່ບໍ່ດີ. ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ບອກວິທີທາງຕ່າງໆ ທີ່ເຮົາອາດຈະແກ້ບັນຫາເລື່ອງຄົນທີ່ ຂໍແຕ່ເງິນ.

ໃຫ້ທ່ານໝາຍ √ ເອົາວິທີທີ່ຖືກກ່ວາ.



ກ.______ເຂົາຕ້ອງການຫຼາຍປານໃດກໍຕາມແຕ່ເຮົາຈະໃຫ້ເທື່ອລະນ້ອຍ.

ຂ.______ຊື້ສິ່ງຂອງໃຫ້ ແທນທີ່ຈະເອົາເງິນໃຫ້.

ຄ.______ໃຫ້ແຕ່ຂອງກິນແລະເຄື່ອງນຸ່ງຕາມທີ່ພະຄຳພີບອກມາແຕ່ບໍ່ໃຫ້ເງິນແລະສິ່ງຂອງອື່ນ ໆ.

ງ. ______ໃຫ້ແຕ່ສະເພາະຄົນທີ່ເຮົາຮູ້ຈັກດີ.

**43** ທີ່ຈະເອົາສິ່ງຂອງໃຫ້ໃນເວລາຈຳເປັນ ເປັນການຊ່ວຍເຫຼືອໂດຍວິທີໃດ?_______________

**44** ໃນຄຳອຸປະມາທີ່ເຮົາກຳລັງຮຽນນີ້ ເຮົາຈະຊ່ວຍຄົນເຫຼົ່ານັ້ນໃນພະນາມຂອງໃຜ? ________

______________________________________________________________

**45** ມີວິທີທາງທີ່ເຮົາຈະຊ່ວຍຄົນທຸກຍາກສອງປະການໃດ? _________________________

______________________________________________________________

**46** ຖ້າເຫັນເຂົາບໍ່ມີຜັກກິນມື້ໜຶ່ງ ແລ້ວເຮົາໄປຊື້ຜັກໃຫ້ເຂົາ ເຮົາຊ່ວຍຢ່າງໃດ? ___________

**47** ເຫັນວ່າເພິ່ນບໍ່ຮູ້ວິທີເຮັດສວນຜັກແລ້ວເຮົາສອນໃຫ້ເພິ່ນຮູ້ເພື່ອວ່າໃນອະນາຄົດເພິ່ນຈະມີຜັກກິນຢູ່ສະເໝີ. ເຮົາຈະຊ່ວຍ ເພິ່ນຢ່າງໃດ? __________________________________

**48** ໃນແຕ່ລະຂໍ້ຕໍ່ໄປນີ້ ອັນໃດທີ່ເປັນການຊ່ວຍໂດຍກົງໃຫ້ຂຽນວ່າ “ກົງ” ອັນໃດທີ່ເປັນການສອນໃຫ້ເຂົາຊ່ວຍຕົນເອງໃຫ້ ຂຽນຄຳວ່າ “ສອນ”

ກ. ______ ສິ່ງທີ່ເຫັນຜົນຮັບທັນທີ　　ຂ. ______ ສິ່ງທີ່ມີຜົນຮັບຢ່າງຖາວອນ

ຄ. ______ ທີ່ເປັນປະໂຫຍດໃນອະນາຄົດ　　ງ. ______ ທີ່ເປັນປະໂຫຍດໃນປະຈຸບັນ

ຈ. ______ ທີ່ຍາກກວ່າ

*ໃຫ້ເຮົາອ້ອນວອນຂໍພະເຈົ້າໃຫ້ເຮົາເຫັນຄວາມທຸກຂອງຜູ້ອື່ນເພື່ອເຮົາຈະຊ່ວຍເຂົາໄດ້. ອາດຈະຊ່ວຍເຂົາໃນ ທັນທີໂດຍກົງ ຫຼືອາດຈະສອນໃຫ້ເຂົາແກ້ບັນຫາເອົາເອງ.*

ໃຫ້ທ່ານເປີດເບິ່ງໜ້າປົກບົດທີ 13 ໜ້າ 138 ອີກ ແລະ
ຂຽນຫົວຂໍ້ຂອງຄຳອຸປະມາທັງ 3 ປະການນັ້ນພ້ອມດ້ວຍບົດແລະຂໍ້.

**49** ຄໍາເທດສະໜາຂອງພະເຢຊູຢູ່ພູໝາກກອກເທດ ສິ້ນສຸດລົງໂດຍຄໍາບັນລະຍາຍການຊົງພິພາກສາບັນດາປະຊາຊາດ. ແລ້ວພະອົງກັບເຫຼົ່າສາວົກກັບໄປເບດທາເນຍ. ຕໍ່ໄປນີ້ໃຫ້ທ່ານຈົດແຕ່ລະສ່ວນປະກອບໃນຄໍາເທດສະໜານັ້ນ.

| ມັດທາຍບົດທີ 24 | ຂໍ້ໃດ? |
|---|---|
| ກ.______________________________ | ____________ |
| ຂ.______________________________ | ____________ |
| **ມັດທາຍບົດທີ 25** | **ຂໍ້ໃດ?** |
| ຄ.______________________________ | ____________ |
| ງ. ______________________________ | ____________ |
| ຈ.______________________________ | ____________ |

*ໃຫ້ເສັງກ່ອນແລ້ວຕື່ມຄວາມທີ່ຂາດໃນຕາຕະລາງວິໄຈເຫດການໃນວັນອັງຄານຕໍ່ໄປ.*

*ຈົ່ງຕຽມໄວ້ເພື່ອປະຊຸມຂ້າງໜ້າ (ຮຽນຄືນເລື່ອງເຫດການວັນອັງຄານ)*

| **50** | ການໂຕ້ຖຽງກັນ ໃນ ພະວິຫານ | ບົດ ແລະ ຂໍ້ |
|---|---|---|
| 1. | ຄໍາອຸປະມາ 3 ປະການ | |
| | ກ. ຄໍາອຸປະມາເລື່ອງ ______________________ | ມທ 21:28 - __ |
| | ຂ. ຄໍາອຸປະມາເລື່ອງ ______________________ | __________ |
| | ຄ. ຄໍາອຸປະມາເລື່ອງ ______________________ | __________ |
| 2. | ບັນຫາ 4 ປະການ | __________ |
| | ງ. ບັນຫາທີໜຶ່ງ ______________________ | __________ |
| | ຈ. ບັນຫາທີສອງ ______________________ | __________ |
| | ສ. ບັນຫາທີສາມ ______________________ | __________ |
| | ຊ. ບັນຫາທີສີ່ ______________________ | __________ |
| 3. | ພະອົງລາຈາກພະວິຫານ | |
| | ກ. ຊົງປະນາມພວກນັກ _______ ແລະພວກ ____________ | __________ |
| | ຂ. ຊົງເສຍພະໄທຍ້ອນກຸງ ______________________ | __________ |
| | ຄ. ຊົງທໍານວາຍວ່າພະ ______________ ຈະຖືກທໍາລາຍ. | __________ |
| 4. | ວິໄຈຄໍາເທດສະໜາຢູ່ພູໝາກກອກເທດ | |
| | ມທ ບົດ 24 ກ. ຄວາມ______________________ | __________ |
| | ຂ. ການສະເດັດມາຂອງ ______________ | __________ |
| | ມທ ບົດ 25 ຄ. ຄໍາອຸປະມາເລື່ອງ______________ | __________ |
| | ງ. ຄໍາອຸປະມາເລື່ອງ______________ | __________ |
| | ຈ. ການຊົງພິ______________________ | __________ |

1 . ກ. ລູກຊາຍສອງຄົນ 21:28-32

**ຄຳຕອບ:**

**1** *ກ. ໝາກກອກເທດ ຂ. 24 ແລະ 25*
*ຄ. ວັນອັງຄານ ງ. ຕອນແລງ ຈ. ພະວິຫານ ສ. ພວກນັກທຳແລະຟາລິຊາຍ*
*ຊ. ຄວາມທຸກລຳບາກ; ການສະເດັດມາຂອງບຸດມະນຸດ*
*ຍ. ເລື່ອງສາວປອດສິບຄົນ ໃນ ມທ 25:1-13; ເລື່ອງເງິນຕາລັນຕົນ ໃນ ມທ 25:14-30*
*ດ. ຝູງແກະແລະຝູງແບ້ ຕ. ມທ 25:31-46*

**2** *ບຸດມະນຸດ ພະເຢຊູ*

**3** *ກ. ກະສັດ ຂ. ພະທີ່ນັ່ງ (ບັນລັງ) ຄ. ກະສັດ ງ. ພະເຢຊູ*

**4** *ກ. ບັນດາປະຊາຊາດ ຂ. ພະເຢຊູ*

**5** *ສອງ*

**6** *ກ. ສອງ ຂ. ສອງ ຄ. ເຂາບົກ ເຂາດີ ງ. ຄົນຊົ່ວ ຄົນສິນທຳ*
*ຈ. ພະເຈາ... ມານ ສ. ຜູ້ທີ່ມີພະບຸດ ແລະ ຜູ້ທີ່ບໍ່ມີພະບຸດ*

**7** *ກ. ສອງ ຂ. ບໍ່ ຄ. ມີແຕ່ສອງຈຳພວກ ບໍ່ມີຈຳພວກທີສາມທີ່ຈະເປັນກາງໄດ້*

**8** *ທຸກຊາດ*

**9** *ຜູ້ທີ່ບໍ່ຊ່ວຍຄົນຕ່ຳຕ້ອຍຈະອອກໄປສູ່ໂທດອັນຕະຫຼອດໄປເປັນນິດ. ພວກສິນທຳກໍຈະເຂົາສູ່ຊີວິດອັນຕະຫຼອດໄປເປັນນິດ*

**10** *ກ. ຈາກພະອົງ ຂ. ທີ່ໄໝ້ຢູ່ເປັນນິດ ຄ. ພະຍາມານກັບບໍລິວານຂອງມັນ*

**11** *ກ. ສອງ ຂ. ສອງ*

**12** *ຊີວິດອັນຕະຫຼອດໄປເປັນນິດ*

**13** *ກ. ພະເຢຊູ ຂ. ບັນດາປະຊາຊາດ ຄ. ສອງ*
*ງ. ຄົນຂ້າງຊ້າຍຈະຖືກໂທດຕະຫຼອດໄປເປັນນິດ*
*ຄົນຂ້າງຂວາຈະເຂົາສູ່ຊີວິດອັນຕະຫຼອດໄປເປັນນິດ*

**14** *ເຂົາຮັກສາຄົນທຸກຍາກ*

**15** *ການທີ່ເຂົາເຮັດນັ້ນ*

**16** *ການເຮັດ (ຂອງເຂົາທຸກຄົນ)*

**17** *ຄວາມເຊື່ອ*

**18** *ກ. ຕາຍແລ້ວ ຂ. ການປະຕິບັດ*

**19** *ກ. ປະຕິບັດ ຂ. ເປັນຫຼັກຖານວ່າມີຄວາມເຊື່ອແທ້ຈິງ*

**20** *ກ. ການປະຕິບັດ ຂ. ເປັນຫຼັກຖານວ່າເຊື່ອ*

**21** *ບໍ່*

**22** *ກ. ພະຄຸນ ຂ. ຄວາມເຊື່ອ*

**ຄຳຕອບ (ຕໍ່):**

**23** *ໃຫ້ເຮົາທັງຫຼາຍປະຕິບັດຕາມ.*

**24** *ເຮົາມີຄວາມເຊື່ອແທ້ຈິງ*

**25** *ການປະຕິບັດ*

**26** *ຫຼັກຖານວ່າເຮົາເຊື່ອ*

**27** *ບໍ່ສາມາດໃຫ້ເຮົາໄດ້ພົ້ນ*

**28** *ພົ້ນ... ຄວາມເຊື່ອ*

**29** *ກ. ມີຄວາມເຊື່ອ ຂ. ຄວາມເຊື່ອ ຄ. ການປະຕິບັດ (ເປັນຫຼັກຖານ)*

**30** *ບໍ່ມີ*

**31** *ຂາດຄວາມເຊື່ອແທ້ຈິງ*

**32** *ປະຕິບັດ... ປະຕິບັດ... ຫຼັກຖານ*

**33** *ກ. ບໍ່ ຂ. ຫຼັກຖານ... ພະເຢຊູ*

**34** *ກ. ສອງ*

*ຂ. ຜູ້ບໍ່ໄດ້ພົ້ນຈະຖືກໂທດຕະຫຼອດໄປເປັນນິດ*

*ຜູ້ໄດ້ພົ້ນໃນພະເຢຊູຈະມີຊີວິດຕະຫຼອດໄປເປັນນິດ*

**35** *ກ. ພະອົງ ຂ. ພະອົງ ຄ. ພະອົງ*

**36** *ພະອົງ*

**37** *ຄ ຖືກ*

**38** *ພະອົງ*

**39** *ເຮົາບໍ່ໄດ້ພົ້ນໂດຍການປະຕິບັດແຕ່ວ່າການປະຕິບັດນັ້ນເປັນຫຼັກຖານວ່າເຮົາມີຄວາມເຊື່ອແທ້ຈິງ.*

**40** *ກ. ໂດຍກົງ ຂ. ໂດຍສອນເຂົາ*

**41** *ກ ຄ ຖືກ*

**42** *(ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມ)*

**43** *ໂດຍກົງ*

**44** *ພະນາມຂອງພະເຢຊູເຈົ້າ*

**45** *ຊ່ວຍເຂົາໂດຍກົງ ສອນໃຫ້ເຂົາຊ່ວຍຕົນເອງ*

**46** *ຊ່ວຍໂດຍກົງ*

**47** *ສອນໃຫ້ເຂົາຊ່ວຍຕົນເອງ*

**48** *"ກົງ" ກ ແລະ ງ "ສອນ" ຂ ຄ ຈ*

**49** *ກ. ເລື່ອງຄວາມທຸກລຳບາກ ຂໍ້ 3-28 ຂ. ການສະເດັດມາຂອງບຸດມະນຸດ ຂໍ້ 29-51*

*ຄ. ຄຳອຸປະມາເລື່ອງສາວປອດສິບຄົນ ຂໍ້ 1-13 ງ. ເລື່ອງເງິນຕາລັນຕົນ ຂໍ້ 14-30*

*ຈ. ການພິພາກສາບັນດາປະຊາຊາດ ຂໍ້ 31-46*

**ຄຳຕອບ (ຕໍ່):**

| | | |
|---|---|---|
| **50** | *1. ກ. ລູກຊາຍສອງຄົນ* | *21:28-32* |
| | *ຂ. ສວນອະງຸ່ນແລະຄົນເຊົ່າ* | *21:33-46* |
| | *ຄ. ພິທີອະພິເສກ* | *22:1-14* |
| | *2. ງ. ເລື່ອງການເສຍຊ່ວຍ* | *22:15-22* |
| | *ຈ. ເລື່ອງການຄືນມາຈາກຕາຍ* | *22:23-33* |
| | *ສ. ເລື່ອງພະບັນຍັດຂໍ້ໃຫຍ່* | *22:34-40* |
| | *ຊ. ເລື່ອງບຸດດາວິດ* | *22:41-46* |
| | *3. ກ. ທຳ ... ຟາລີຊາຍ* | *23:1-36* |
| | *ຂ. ເຢລູຊາເລັມ* | *23:37-39* |
| | *ຄ. ພະວິຫານ* | *24:1-2* |
| | *4. ກ. ທຸກລຳບາກ* | *24:3-28* |
| | *ຂ. ຂອງບຸດມະນຸດ* | *24:29-31* |
| | *ຄ. ສາວປອດສິບຄົນ* | *25:1-13* |
| | *ງ. ເງິນຕາລັນຕົນ* | *25:14-30* |
| | *ຈ. ພິພາກສາບັນດາປະຊາຊາດ* | *25:31-46* |